**ມິຊຊາອາທິດທີ 24 ການົດທຳມະດາປີ A**

**ວັນທີ 13 ກັນຍາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 18, 21-35**

ໃນເວລານັ້ນ, ເປໂຕຣເຂົ້າມາຂາບທູນພຣະເຢຊູເຈົ້າວ່າ: "ພຣະອົງເຈົ້າ, ຂ້ານ້ອຍຕ້ອງຍົກໂທດໂຜດຜິດໃຫ້ພີ່ນ້ອງຂອງຂ້ານ້ອຍຈັກທໍ່ໃດເທື່ອ? ຈົນເຖິງເຈັດເທື່ອບໍ?" ພຣະເຢຊູເຈົ້າຊົງຕອບວ່າ: "ເຮົາບໍ່ບອກເຈົ້າວ່າ ຕ້ອງຍົກໂທດໃຫ້ເຈັດເທື່ອດອກ ແຕ່ຕ້ອງຍົກໂທດໃຫ້ເຖິງເຈັດສິບເທື່ອເຈັດ".

"ເພາະສະນັ້ນ ອານາຈັກສະຫວັນຈຶ່ງປຽບດັ່ງກະສັດອົງໜຶ່ງທີ່ປະສົງຈະຄິດບັນຊີກັບພວກຄົນໃຊ້. ໃນເວລາກຳລັງຄິດບັນຊີຢູ່ນັ້ນ, ພໍດີເຂົານຳຄົນຜູ້ໜຶ່ງທີ່ຕິດໜີ້ຢູ່ໝື່ນຫລຽນທອງຄຳເຂົ້າມາ. ແຕ່ຍ້ອນຄົນຜູ້ນັ້ນບໍ່ມີຫຍັງຈະໃຊ້ໜີ້ໄດ້, ກະສັດຈຶ່ງຮັບສັ່ງ: ໃຫ້ຂາຍຄົນຜູ້ນັ້ນພ້ອມທັງບຸດ, ພັນລະຍາແລະຊັບສິນຈົນໝົດເພື່ອໃຊ້ໜີ້. ຄົນໃຊ້ຜູ້ນັ້ນຈຶ່ງຂາບລົງໄຫວ້ວອນວ່າ: "ຂໍກະລຸນາໂຈະໄວ້ກ່ອນ ແລ້ວຂ້າພະເຈົ້າຈະໃຊ້ແທນໃຫ້ໝົດ". ຜູ້ເປັນນາຍຮູ້ສຶກສົງສານຈຶ່ງປ່ອຍຜູ້ນັ້ນໄປພ້ອມທັງຍົກໜີ້ທັງໝົດໃຫ້ດ້ວຍ. ພໍອອກໄປແລ້ວ, ເຂົາພົບເພື່ອນຄົນໜຶ່ງທີ່ເປັນໜີ້ເຂົາຮ້ອຍຫລຽນ, ເຂົາກໍໂດດເຂົ້າບີບຄໍເພື່ອນພ້ອມທັງຂູ່ວ່າ: "ໃຊ້ໜີ້ທັງໝົດໃຫ້ເຮົາ". ເພື່ອນຄົນນັ້ນຈຶ່ງຂາບລົງໄຫວ້ວອນວ່າ: "ຂໍກະລຸນາໂຈະໄວ້ກ່ອນແລ້ວເຮົາຈະໃຊ້ແທນ". ແຕ່ຄົນຜູ້ນັ້ນບໍ່ຍອມຟັງເລີຍ ຍິ່ງກວ່ານັ້ນອີກເຂົາຍັງເອົາເພື່ອນໄປຂັງຄຸກໄວ້ຈົນກວ່າຈະໃຊ້ໜີ້ນັ້ນ. ເພື່ອນຄົນອື່ນເຫັນດັ່ງນັ້ນກໍມີຄວາມເສົ້າໃຈຢ່າງໃຫຍ່ ແລະໄດ້ໄປລາຍງານເລື່ອງນີ້ໃຫ້ຜູ້ເປັນນາຍຊາບ. ນາຍຈຶ່ງສັ່ງໃຫ້ນຳຕົວຄົນນັ້ນເຂົ້າມາແລະກ່າວວ່າ: "ຄົນໃຊ້ໂທດຮ້າຍ, ເຮົາໄດ້ຍົກໜີ້ໃຫ້ເຈົ້າຈົນໝົດຍ້ອນເຈົ້າວອນຂໍເຮົາ ! ສ່ວນເຈົ້າເອງ, ເຈົ້າຕ້ອງມີຄວາມສົງສານຕໍ່ເພື່ອນຂອງເຈົ້າຄືເຮົາໄດ້ມີຄວາມສົງສານຕໍ່ເຈົ້າແມ່ນບໍ? ນາຍມີຄວາມໂກດຮ້າຍຈຶ່ງມອບຄົນຜູ້ນັ້ນໃຫ້ພວກທຳມະໂລງຈົນກວ່າເຂົາຈະໃຊ້ໜີ້ໃຫ້ໝົດໄດ້. ພຣະບິດາຂອງເຮົາຜູ້ສະຖິດຢູ່ສະຫວັນກໍຈະກະທຳຕໍ່ພວກເຈົ້າດັ່ງນີ້ດ້ວຍ, ຖ້າຫາກວ່າຜູ້ໜຶ່ງຜູ້ໃດໃນພວກເຈົ້າບໍ່ຍອມອະໄພໂທດໃຫ້ພີ່ນ້ອງຂອງຕົນຢ່າງຈິງໃຈ."

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 18, 21-35**

ບົດອ່ານທັງສາມບົດຊຶ່ງພວກເຮົາໄດ້ຟັງວັນອາທິດນີ້ເປັນຕອນທີ່ມີຄວາມໝາຍທີ່ສຸດ. ເພາະທັງສາມລ້ວນແຕ່ກ່າວເຖິງຄວາມຮັກແລະການໃຫ້ອະໄພ.

ໃນບົດອ່ານທີໜຶ່ງຈາກໜັງສືບຸດຊີຣາ, ທ່ານໄດ້ສອນພວກເຮົາເໝືອນກັບຜູ້ເປັນປູ່ສອນຫລານໂດຍກ່າວວ່າ: "ຈົ່ງອະໄພໂທດໃຫ້ໝູ່ເພື່ອນທີ່ທຳຜິດເຈົ້າ ແລ້ວເມື່ອເຈົ້າສວດພາວະນາບາບຂອງເຈົ້າຈຶ່ງຈະຫລຸດ" (ບຊຣ 28, 2). ໝາຍວ່າຄຳພາວະນາທີ່ຊອບພຣະໄທພຣະເຈົ້າທີ່ສຸດ ຄືຄວາມຮັກເມດຕາທີ່ພວກເຮົາມີຕໍ່ຄົນອື່ນ. ເມື່ອພວກເຮົາມີຄວາມເມດຕາສົງສານແລະໃຫ້ອະໄພແກ່ຄົນອື່ນແລ້ວ, ເວລາພວກເຮົາສວດພາວະນາວິງວອນພຣະເຈົ້າ ພຣະອົງກໍຈະສະດັບຟັງແລະໃຫ້ອະໄພແກ່ພວກເຮົາ.

ສ່ວນໃນບົດອ່ານທີສອງ, ນັກບຸນເປົາໂລສົມທຽບໃຫ້ພວກເຮົາເຂົ້າໃຈວ່າ ບໍ່ມີໃຜມີຊີວິດເພື່ອຕົວເອງ. ແມ່ນແຕ່ພຣະເຢຊູເຈົ້າເອງ, ຊີວິດຂອງພຣະອົງແມ່ນໃນພຣະບິດາ. ແລະການຕາຍຂອງພຣະອົງແມ່ນເພື່ອໄຖ່ບາບພວກເຮົາ. ດັ່ງນັ້ນ, ພວກເຮົາເອງກໍຕ້ອງມີຊີວິດເພື່ອພຣະເຈົ້າແລະເພື່ອຄົນອື່ນ.

ແລະໃນພຣະວໍລະສານວັນນີ້, ພຣະເຢຊູເຈົ້າກໍສອນນັກບຸນເປໂຕໃຫ້ຍົກໂທດໂຜດຜິດຕໍ່ຜູ້ທີ່ທຳຜິດຕໍ່ເຂົາເຖິງເຈັດສິບເທື່ອເຈັດ. ໝາຍວ່າຕ້ອງໃຫ້ອະໄພເລື້ອຍໆໄປ. ຈາກນັ້ນ, ພຣະເຢຊູເຈົ້າກໍເລົ່າຄວາມປຽບທຽບເລື່ອງກະສັດແລະຜູ້ເປັນໜີ້ສິນທ່ານ. ສິ່ງທີ່ທຳໃຫ້ກະສັດຍົກໜີ້ທັງໝົດໃຫ້ຜູ້ເປັນໜີ້ສິນທ່ານກໍຄື: ຄວາມເມດຕາສົງສານ. ເມື່ອຜູ້ທີ່ໄດ້ຮັບຄວາມເມດຕາສົງສານຈາກກະສັດແລ້ວ ແທນທີ່ເຂົາຈະມີຄວາມເມດຕາສົງສານຕໍ່ຄົນອື່ນ ແລະເປັນຕົ້ນຄົນທີ່ເປັນໜີ້ສິນເຂົາ, ເຂົາພັດບໍ່ມີຄວາມເມດຕາສົງສານຕໍ່ຜູ້ນັ້ນເລີຍ. ເມື່ອເຂົາບໍ່ມີຄວາມສົງສານຄົນອື່ນ, ກະສັດກໍຈະບໍ່ມີຄວາມສົງສານຕໍ່ເຂົາເຊັ່ນດຽວກັນ. ຄວາມປຽບທຽບເລື່ອງນີ້ທຳໃຫ້ພວກເຮົາຄິດຫາຄຳສັ່ງສອນອັນໃດຂອງພຣະເຢຊູເຈົ້າ? ແນ່ນອນ, ຄວາມປຽບທຽບນີ້ທຳໃຫ້ພວກເຮົາຄິດຫາບົດພາວະນາຊຶ່ງພຣະເຢຊູເຈົ້າເອງໄດ້ສອນພວກເຮົານັ້ນຄື "ບົດໂອພຣະບິດາ". ໃນບົດໂອພຣະບິດານີ້, ພວກເຮົາວອນຂໍພຣະອົງຍົກໂທດໂຜດຜິດໃຫ້ພວກເຮົາ, ເໝືອນກັບພວກເຮົາຍົກໂທດໂຜດຜິດໃຫ້ຜູ້ອື່ນ. ແຕ່ສ່ວນຫລາຍ, ພວກເຮົາບໍ່ມັກຍົກໂທດໂຜດຜິດໃຫ້ຜູ້ອື່ນ ເພາະເປັນສິ່ງທີ່ຍາກໃນການປະຕິບັດ. ແຕ່ພວກເຮົາລືມໄປວ່າ ຖ້າພວກເຮົາບໍ່ຍົກໂທດໂຜດຜິດໃຫ້ຜູ້ອື່ນ, ພຣະບິດາສະຫວັນກໍຈະບໍ່ຍົກໂຜດໂຜດຜິດໃຫ້ພວກເຮົາເຊັ່ນດຽວກັນ. ດ້ວຍເຫດນີ້, ຖ້າພວກເຮົາຢາກໃຫ້ບາບໂທດຂອງພວກເຮົາຫລຸດພົ້ນໄປ, ພວກເຮົາກໍຕ້ອງຮູ້ຈັກໃຫ້ອະໄພຕໍ່ຜູ້ອື່ນ. ດັ່ງໃນບົດອ່ານທີໜຶ່ງຈາກໜັງສືບຸດຊີຣາທີ່ພວກເຮົາໄດ້ຟັງວັນນີ້ກ່າວວ່າ: "ຈົ່ງອະໄພໂທດໃຫ້ໝູ່ເພື່ອນທີ່ທຳຜິດເຈົ້າ ແລ້ວເມື່ອເຈົ້າສວດພາວະນາບາບຂອງເຈົ້າຈຶ່ງຈະຫລຸດ" (ບຊຣ 28, 2). ເພາະ "ຖ້າເຈົ້າບໍ່ອີດູສົງສານຄົນອື່ນຊຶ່ງເປັນໝູ່ເພື່ອນຂອງຕົນແລ້ວ ເຈົ້າຈະວິງວອນຂໍພຣະອົງຍົກໂທດໂຜດຜິດໃຫ້ຕົວເອງໄດ້ຢ່າງໃດ?" (ບຊຣ 28, 3).

**ພາວະນາ**

ໂອພຣະເຈົ້າ, ໂຜດປະທານດວງໃຈໃໝ່ໃຫ້ລູກ ເພື່ອລູກຈະມີດວງໃຈທີ່ເປັນກ້ອນເນື້ອຮູ້ຈັກຮັກ, ເມດຕາ, ສົງສານແລະໃຫ້ອະໄພແກ່ຜູ້ທີ່ທຳຜິດຕໍ່ລູກ. ເໝືອນກັບພຣະອົງໄດ້ໃຫ້ອະໄພລູກເມື່ອລູກທຳບາບຜິດຕໍ່ພຣະອົງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ